ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ພິທີ ມອບ-ຮັບໜ້າທີ່ ຫົວໜ້າຫ້ອງການ ແລະ ຫົວໜ້າກົມຈັດຕັ້ງແລະພະນັກງານ ລະຫວ່າງຜູ້ເກົ່າ ແລະ ຜູ້ໃໝ່



ໃນວັນທີ 23 ຕຸລາ 2023 ທີ່ຫ້ອງປະຊຸມໃຫຍ່ຊັ້ນ 7 ທຫລ ໄດ້ຈັດພິທີມອບ-ຮັບໜ້າທີ່ ຫົວໜ້າຫ້ອງການ ແລະ ຫົວໜ້າກົມຈັດຕັ້ງແລະພະນັກງານ ລະຫວ່າງຜູ້ເກົ່າ ແລະ ຜູ້ໃໝ່ ລະຫວ່າງ ທ່ານ ພານຸສັກ ແກ່ນວົງພະຈັນ ກຳມະການພັກ ທຫລ ຫົວໜ້າກົມຈັດຕັ້ງ ແລະ ພະນັກງານ ຜູ້ເກົ່າ ແລະ ທ່ານ ນາງ ໂພທິຈັນ ທຳມະເທວາ ເລຂາຄະນະພັກຮາກຖານ ຫົວໜ້າກົມຈັດຕັ້ງ ແລະ ພະນັກງານ ຜູ້ໃໝ່, ໂດຍການເຂົ້າຮ່ວມເປັນສັກຂີພິຍານຂອງ ທ່ານ ນາງ ຂັນແກ້ວ ຫຼ້າມະນີເງີາ ກຳມະການປະຈຳພັກ ທຫລ ຮອງຜູ້ວ່າການ ທຫລ, ມີບັນດາຄະນະກົມພາຍໃນ ທຫລ, ຄະນະພະແນກ ແລະ ວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.

ໃນພິທີ, ທ່ານ ນ. ພູມມະລີ ສີຣິພົນເດດ ຮອງຫົວໜ້າກົມຈັດຕັ້ງແລະພະນັກງານ ໄດ້ຜ່ານດຳລັດວ່າດ້ວຍການແຕ່ງຕັ້ງຫົວໜ້າຫ້ອງການ ທະນາຄານແຫ່ງ ສປປ ລາວ ສະບັບເລກທີ 284/ນຍ, ລົງວັນທີ 28 ກັນຍາ 2023 ໂດຍຕົກລົງ

ແຕ່ງຕັ້ງ ທ່ານ ພານຸສັກ ແກ່ນວົງພະຈັນ ເປັນຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ ແລະ ດຳລັດວ່າດ້ວຍການແຕ່ງຕັ້ງຫົວໜ້າກົມຈັດຕັ້ງແລະພະນັກງານ ສະບັບເລກທີ 285/ນຍ, ລົງວັນທີ 28 ກັນຍາ 2023 ໂດຍແມ່ນ ທ່ານ ນາງ ໂພທິຈັນ ທຳມະເທວາ ເປັນຫົວໜ້າກົມຈັດຕັ້ງແລະພະນັກງານ.



ທ່ານ ນ. ໂພທິຈັນ ທຳມະເທວາ ແລະ ທ່ານ ພານຸສັກ ແກ່ນວົງພະຈັນ



ທ່ານ ພານຸສັກ ແກ່ນວົງພະຈັນ ແລະ ທ່ານ ສຸກັນ ຈັນທະວົງ

ໂອກາດທີ່ມີຄວາມໝາຍສຳຄັນນີ້ ທ່ານ ນາງ ຂັນແກ້ວ ຫຼ້າມະນີເງິາ ກຳມະການປະຈຳພັກ ທຫລ ຮອງຜູ້ວ່າການ ທຫລ, ໄດ້ໂອ້ລົມ ໃນພິທີການມອບ-ຮັບ ໜ້າທີ່ໃນຄັ້ງນີ້ວ່າ ສຸດທີ່ມີຄວາມໝາຍສຳຄັນຕໍ່ການເຄື່ອນໄຫວວຽກງານຂອງຂະແໜງ ການທະນາຄານ ເວົ້າລວມ, ເວົ້າສະເພາະກໍ່ຄື ໃນໄລຍະຜ່ານມາ ທຫລ ກໍ່ໄດ້ມີການສັບປ່ຽນໝູນວຽນໜ້າວຽກງານຂອງພະນັກງານຂັ້ນນຳພາຫຼັກແຫຼ່ງຈຳນວນຫຼາຍສົມຄວນ ເພື່ອປັບປຸງວຽກງານໃນແຕ່ລະໄລຍະໃຫ້ດີຍິ່ງຂຶ້ນ ແລະ ທັງເປັນການບຳລຸງຍົກລະດັບພະນັກງານການນຳຂອງພວກເຮົາໃຫ້ມີຄວາມຮູ້-ຄວາມສາມາດທີ່ເລິກເຊິ່ງ ແລະ ຮອບດ້ານຍິ່ງຂຶ້ນ ການໝູນວຽນຕຳແໜ່ງສັບປ່ຽນໜ້າທີ່ ແລະ ບ່ອນປະຈຳການ ແມ່ນເປັນເລື່ອງປົກກະຕິ ຊຶ່ງແມ່ນກົດເກນ ແລະ ຫຼັກການຂອງພັກໃນວຽກງານຄຸ້ມຄອງພະນັກງານ ໂດຍອີງໃສ່ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານໃນໄລຍະໃໝ່ ແລະ ສະພາບເງື່ອນໄຂຕົວຈິງຂອງແຕ່ລະບ່ອນ-ແຕ່ລະເປົ້າໝາຍ. ພ້ອມນີ້ ທ່ານໄດ້ມີຄຳເຫັນ ແລະ ໃຫ້ເອົາໃຈໃສ່ໃນບາງບັນຫາດັ່ງນີ້:

1. ໃຫ້ບັນດາສະຫາຍຄະນະໜ່ວຍພັກ-ຄະນະນຳຂອງກົມກ່ຽວຂ້ອງເປັນເອກະພາບຕໍ່ການປັບປຸງຄືດັ່ງກ່າວ; ພ້ອມນີ້, ກໍ່ໃຫ້ເປັນເຈົ້າການນຳພາແນວຄິດຕໍ່ສະມາຊິກພັກ-ພະນັກງານຢູ່ພາຍໃນໜ່ວຍພັກ-ກົມກອງຂອງຕົນໃຫ້ເຂົ້າໃຈຢ່າງຖືກຕ້ອງ ແລະ ຮັບຮູ້ຢ່າງທົ່ວເຖິງ;
2. ໃຫ້ບັນດາສະຫາຍສືບຕໍ່ປົກປັກຮັກສາຄວາມສາມັກຄີພາຍໃນພັກ. ພາຍໃນກົມກອງຂອງຕົນໃຫ້ມີຄວາມໜັກແໜ້ນ, ມີຄວາມເປັນເອກະພາບກັນສູງ, ສືບຕໍ່ເປັນຫຼັກແຫຼ່ງ, ເປັນຄັນທຸງ ແລະ ເປັນແກນນຳໃນການເຕົ້າໂຮມຄວາມສາມັກຄີໃນຖັນແຖວສະມາຊິກພັກ-ພະນັກງານຂອງຕົນ;

3. ໃຫ້ຄະນະພັກ-ຄະນະກົມຂອງກົມກອງທີ່ໄດ້ຖືກປັບປຸງປະຊຸມປຶກສາຫາລື, ແບ່ງງານ-ແບ່ງຄວາມຮັບຜິດຊອບໃຫ້ກັນ ຕາມພາລະບົດບາດທີ່ໄດ້ກຳນົດໄວ້ໃຫ້ລະອຽດຈະແຈ້ງ, ສອດຄ່ອງກັບລະດັບຄວາມຮູ້ ແລະ ປະສົບການຂອງແຕ່ລະສະຫາຍ ເພື່ອພ້ອມກັນສູ້ຊົນເຮັດໃຫ້ສຳເລັດໜ້າທີ່ການເມືອງທີ່ຖືກມອບໝາຍ ໂດຍສະເພາະການຈັດຕັ້ງຜັນຂະຫຍາຍ ແຜນງານ-ໂຄງການຂອງກົມກອງທີ່ໄດ້ກຳນົດໄວ້ໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້;




ຕິດພັນກັບການມອບ-ຮັບໜ້າທີ່ຂອງສອງຕຳແໜ່ງງານດັ່ງກ່າວ ແລະ ກໍ່ໄດ້ປະກາດການປັບປຸງຂັ້ນພະແນກຈຳນວນໜຶ່ງຂອງຫ້ອງການ ແລະ ກົມຈັດຕັ້ງແລະພະນັກງານ ຕື່ມອີກ.

# ຂ່າວ-ພາບ: ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ

*ຢູ່ເມືອງລາວໃຊ້ແຕ່ເງິນກີບ*